Received on 23-03-07

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=== • • ໝ ໐ ໜ • • ===-----

ກະຊວງສາທາລະນະສຸກ

ເລກທີ: 385 / ກຊສ.

"Smoke Free Ministry of Health"

ນະຄອນຫຼວງວຽງຈັນ, ວັນທີ 21 MAR 2007

## ຄຳສັ່ງ

## ຂອງ ລັດຖະມົນຕີ ວ່າການ ກະຊວງສາທາລະນະສຸກ.

ເຖິງ: ທ່ານ ຫົວໜ້າຫ້ອງການ, ກົມ, ສະຖາບັນ, ສູນ, ໂຮງໝໍ, ໂຮງຮຽນ, ໂຮງງານ, ພະແນກ ສາທາລະນະສຸກ ນະຄອນຫລວງວຽງຈັນ, ພະແນກ ສາທາລະນະສຸກແຂວງ, ຫ້ອງການ ສາທາລະນະສຸກເມືອງ ແລະ ສຸກສາລາ ໃນຂອບເຂດທົ່ວປະເທດ.

**ເລື້ອງ : ການສ້າງເຂດປອດຄວັນຢາສູບ ພາຍໃນຂະແໜງການ ສາທາລະນະສຸກ.**

- ອີງຕາມ: ກົດໝາຍ ວ່າດ້ວຍການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ສະບັບເລກທີ 01/ ສພຊ, ລົງວັນທີ 10 ເມສາ 2001
- ອີງຕາມ: ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງສາທາລະນະສຸກ ສະບັບເລກທີ 020/ ນຍ, ລົງວັນທີ19 ມີນາ 1999
- ອີງຕາມ: ນະໂຍບາຍ ວ່າດ້ວຍການຄວບຄຸມຢາສູບ ຢູ່ ສປປ ລາວ 2001 ລົງວັນທີ 27ມີນາ 2001
- ອີງຕາມ: ເນື້ອໃນ ມາດຕາ 08 ຂອງສົນທິສັນຍາ ຂອງອົງການອະນາໄມໂລກ ວ່າດ້ວຍການຄວບ ຄຸມຢາສູບ .

**ລັດຖະມົນຕີ ວ່າການ ກະຊວງສາທາລະນະສຸກ ອອກຄຳສັ່ງດັ່ງນີ້:**

1. ໃຫ້ແຕ່ລະຫ້ອງການ, ກົມ, ສະຖາບັນ, ສູນ, ໂຮງໝໍ, ໂຮງຮຽນ, ໂຮງງານ, ພະແນກ ສາທາລະນະສຸກ ແຕ່ລະຂັ້ນ ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບ ຜົນຮ້າຍຂອງການສູບຢາ ໃຫ້ພະນັກງານທຸກຄົນ ທີ່ຢູ່ໃນການຈັດຕັ້ງຂອງທ່ານ ຮັບຮູ້ ຢ່າງທົ່ວເຖິງ;
2. ສ້າງບໍລິເວນດັ່ງຕໍ່ໄປນີ້ ໃຫ້ເປັນ "**ເຂດປອດຄວັນຢາສູບ**" ເຊັ່ນ: ກະຊວງ, ກົມ, ສູນ, ສະຖາບັນ, ໂຮງໝໍ, ໂຮງຮຽນ, ໂຮງງານ, ສຸກສາລາ, ຫ້ອງການ, ຫ້ອງຮັບແຂກ, ຫ້ອງປະຊຸມ, ຫ້ອງພັກຜ່ອນ, ຫ້ອງກິນເຂົ້າ, ຫ້ອງນ້ຳ ແລະ ຫ້ອງອື່ນໆ ທີ່ຢູ່ໃນຂະແໜງສາທາລະນະສຸກແຕ່ລະຂັ້ນ ພາຍໃຕ້ການຄຸ້ມຄອງຂອງຕົນ; ພ້ອມດຽວກັນນັ້ນກໍ່ໃຫ້ຈັດເຂດອະນຸຍາດໃຫ້ສູບຢາຢູ່ນອກອາຄານ ຫຼື ສຳນັກງານຂອງຕົນໄວ້ ໂດຍຕິດປ້າຍປະກາດ " **ເຂດສູບຢາ**" ແລະປະກອບ

ບ່ອນເຊັ່ຍຂີ້ກອກຢາ ແລະ ບ່ອນມອດກົດກອກຢາໃຫ້ພຽງພໍ ແລະ ມີການລະບາຍອາກາດຢ່າງເໝາະສົມ ແຕ່ຕ້ອງແຍກອອກຈາກເຂດ " **ຫ້າມສູບຢາ** " ຢ່າງຂາດຕົວ

3. ໃຫ້ຕິດການໝາຍ (ໂລໂກ)" **ຫ້າມສູບຢາ** " ຫລື ຄຳເຕືອນຕ່າງໆ ກ່ຽວກັບຜົນຮ້າຍຂອງການສູບຢາ ໃສ່ໃນບໍລິເວນສະຖານທີ່ໄດ້ກ່າວໄວ້ໃນຂໍ້ 2

4. ພະນັກງານ ທີ່ຢູ່ໃນຂະແໜງ ສາທາລະນະສຸກ ແຕ່ລະຂັ້ນ ຕ້ອງເປັນເຈົ້າການ ແລະ ເປັນແບບຢ່າງໃນການເຂົ້າຮ່ວມ ວັນຕ້ານຢາສູບໂລກ ແລະ ຕ້ອງປຸກລະດົມໃຫ້ສະມາຊິກພາຍໃນສຳນັກງານ, ອົງການ, ຄອບຄົວ ແລະ ໝູ່ເພື່ອນ ໃນການຫລຸດຜ່ອນ ການສູບຢາ ແລະ ເລີກສູບຢາ;

5. ທຸກພາກສ່ວນໃນຂະແໜງ ສາທາລະນະສຸກ ແຕ່ລະຂັ້ນ ຕ້ອງເປັນເຈົ້າການປະສານງານກັນໃນສາຍ ເພື່ອເຜີຍແຜ່ ຂໍ້ມູນຂ່າວສານ ແລະ ໃຫ້ການສຸຂະສຶກສາ ເຖິງຜົນຮ້າຍຂອງການສູບຢາ ໃຫ້ແກ່ປະຊາຊົນ ເພື່ອຈັດຕັ້ງປະຕິບັດໃນການປະກາດ ກ່ຽວກັບການ ຫ້າມສູບຢາ ທີ່ລະບຸໄວ້ໃນຂໍ້ 2

6. ຫ້ອງການ, ກົມ, ສະຖາບັນ, ສູນ, ໂຮງໝໍ, ໂຮງຮຽນ, ໂຮງງານ, ພະແນກ ສາທາລະນະສຸກນະຄອນຫລວງ, ພະແນກ ສາທາລະນະສຸກ ແຂວງ, ຫ້ອງການສາທາລະນະສຸກ ເມືອງ ແລະ ສຸກສາລາ ຕ້ອງຈັດຕັ້ງປະຕິບັດ ສ້າງເຂດປອດຄວັນສູບຢາ ນີ້ຢ່າງເຂັ້ມງວດ;

7. ການຈັດຕັ້ງປະຕິບັດ ຫລື ການຝ່າຝືນ ປະກາດ ກ່ຽວກັບການຫ້າມສູບຢານີ້ ໃຫ້ຖືວ່າແມ່ນໜຶ່ງ ໃນມາດຕະຖານ ແລະ ຄຸນສົມບັດຂອງພະນັກງານ ( ຖ້າພະນັກງານ ທ່ານໃດຫາກຈັດຕັ້ງປະຕິບັດໄດ້ດີ ຢ່າງຖືກຕ້ອງ ແລະ ເປັນແບບຢ່າງທີ່ດີ ໃຫ້ແກ່ໝູ່ເພື່ອນໃນການເລີກສູບຢາຈະໄດ້ຮັບການຍ້ອງຍໍສັນລະເສີນ ຕາມຄວາມເໝາະສົມ, ແຕ່ຖ້າຫາກພະນັກງານທ່ານໃດ ທີ່ຍັງບໍ່ທັນປະຕິບັດໄດ້ດີ ຈະຖືກຕຳນິ, ສິ່ງຂ່າວ, ຕັກເຕືອນ ພ້ອມທັງຈະຖືກພິຈາລະນາໃນການຈັດແບ່ງປະເພດຕ່າງໆ ຂອງພະນັກງານ )

8. ໃຫ້ການຈັດຕັ້ງ ແຕ່ລະແຫ່ງ ລາຍງານ ໃນການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວຄຳສັ່ງສະບັບນີ້ ໃຫ້ກະຊວງ ສາທາລະນະສຸກ. ກົມອະນາໄມ - ກັນພະຍາດ ເປັນເຈົ້າການໃນການຕິດຕາມ, ກວດກາ, ປະເມີນຜົນ ການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ໃຫ້ໄດ້ຮັບຜົນດີ; ໃຫ້ຂະແໜງສາທາລະນະສຸກ ແຕ່ລະຂັ້ນ, ທຸກພາກສ່ວນ ເອົາເຂົ້າເປັນມາດຕະຖານ, ແຜນຍຸດທະສາດຂອງໃຜລາວ

9. ຄຳສັ່ງສະບັບນີ້ ມີຜົນສັກສິດ ບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ .

<u>ລັດຖະມົນຕີວ່າການ ກະຊວງສາທາລະນະສຸກ</u>

ທດ. ປອນເມກ ດາລາລອຍ